## ມິຊຊາອາທິດທີ 13 ກໍານົດທໍາມະດາ
## ວັນທີ 26 ມິຖຸນາ 2022



**ພຣະວໍລະສານໂດຍນັກບຸນລູກາ 9, 51-62**

ເມື່ອໃກ້ຈະເຖິງເວລາຕ້ອງຈາກໂລກນີ້ໄປ, ພຣະເຢຊູເຈົ້າຕັດສິນໃຈສະເດັດໄປນະຄອນເຢລູຊາແລມ. ພຣະອົງຊົງໃຊ້ພວກລູກສິດລ່ວງໜ້າໄປກ່ອນ. ພວກລູກສິດກໍອອກເດີນທາງແລະເຂົ້າໄປໃນບ້ານຂອງຊາວຊາມາຣີບ້ານໜຶ່ງເພື່ອຈັດຕຽມທີ່ພັກເຊົາແຕ່ເຂົາບໍ່ຍອມຮັບຕ້ອນ, ຍ້ອນວ່າພຣະອົງຈະໄປນະຄອນເຢລູຊາແລມ. ເມື່ອເຫັນດັ່ງນັ້ນ, ຢາໂກເບແລະຢວງຈຶ່ງທູນພຣະອົງວ່າ: ພຣະອົງເຈົ້າເອີຍ! ພຣະອົງເຫັນດີໃຫ້ພວກຂ້ານ້ອຍສັ່ງໄຟຈາກສະຫວັນມາເຜົາຜານຄົນຊຸມນີ້ບໍ? ແຕ່ພຣະເຢຊູເຈົ້າຊົງຫັນມາຮ້າຍພວກເຂົາແລ້ວກໍສະເດັດໄປບ້ານອື່ນພ້ອມກັບພວກລູກສິດ.

ໃນເວລາພຣະອົງເດີນທາງໄປນັ້ນ, ມີຄົນຜູ້ໜຶ່ງມາທູນວ່າ: ພຣະອົງໄປໃສຂ້ານ້ອຍຂໍໄປນໍາ. ພຣະເຢຊູເຈົ້າຕອບວ່າ: ໝາຈອກຍັງມີໂກນ, ນົກຢູ່ອາກາດຍັງມີຮັງ, ສ່ວນບຸດມະນຸດບໍ່ມີບ່ອນພັກເຊົາ.

ແລ້ວພຣະອົງກ່າວກັບຄົນໜຶ່ງອີກວ່າ: ຈົ່ງມານໍາເຮົາ. ຄົນນັ້ນທູນຕອບວ່າ: ຂ້ານ້ອຍຂໍເມືອຝັງສົບພໍ່ຂອງຂ້ານ້ອຍກ່ອນ. ພຣະເຢຊູເຈົ້າຈຶ່ງຕອບເຂົາວ່າ: ປະໃຫ້ຄົນຕາຍຝັງກັນເອງເສຍ ສ່ວນເຈົ້າຈົ່ງໄປປະກາດພຣະລາໄຊຂອງພຣະເຈົ້າ.

ມີອີກຜູ້ໜຶ່ງມາທູນພຣະອົງວ່າ: ຂ້ານ້ອຍຈະໄປນໍາພຣະອົງ ແຕ່ຂໍໃຫ້ຂ້ານ້ອຍເມືອລາໄທເຮືອນເສຍກ່ອນ. ພຣະເຢຊູເຈົ້າຕອບວ່າ: ຜູ້ໃດຈັບຄັນໄຖແລ້ວຫາກຍັງຫລຽວຄືນຫລັງ ຜູ້ນັ້ນບໍ່ສົມກັບພຣະລາໄຊຂອງພຣະເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ວາຈາພຣະເຈົ້າໃນວັນອາທິດທີ 13 ກຳນົດທຳມະດານີ້ກ່າວເຖິງສຽງຮຽກເອີ້ນຂອງພຣະເຈົ້າແລະຄຳຕອບຮັບຂອງມະນຸດ. ວັນນີ້ຈຶ່ງເປັນໂອກາດໃຫ້ພວກເຮົາໄດ້ເຂົ້າໃຈເຖິງຄວາມໝາຍຂອງກະແສຮຽກເພື່ອເບິ່ງຄືນກະແສຮຽກຊຶ່ງພວກເຮົາໄດ້ຮັບຈາກພຣະເຈົ້າ.

ໃນບົດອ່ານທີ່ໜຶ່ງຈາກໜັງສືປະຫວັດກະສັດ, ພວກເຮົາເຫັນວ່າກະແສຮຽກກ່ອນອື່ນໝົດແມ່ນສຽງຮຽກເອີ້ນຂອງພຣະເຈົ້າແລະຄຳຕອບຮັບຂອງຜູ້ຖືກເລືອກສັນ. ແລະສິ່ງສຳຄັນໃນກະແສຮຽກແມ່ນຄວາມສະໝັກໃຈ. ຄວາມສະໝັກໃຈຂອງຜູ້ຮຽກເອີ້ນແມ່ນພຣະເຈົ້າ. ພຣະອົງຮຽກເອົາຜູ້ທີ່ພຣະອົງຕ້ອງການ. ວັນນີ້, ພຣະອົງກໍໄດ້ຮຽກເອົາເອລີເຊ. ຈາກນັ້ນ, ກໍແມ່ນຄວາມສະໝັກໃຈຂອງຜູ້ຖືກຮຽກເອີ້ນ. ເອລີເຊໄດ້ຕອບຮັບສຽງກາງຮຽກເອີ້ນຂອງພຣະເຈົ້າດ້ວຍຄວາມຍິນດີ. ຄວາມຍິນດີນີ້ສະແດງອອກຜ່ານການປະຖິ້ມທຸກສິ່ງຢ່າງທີ່ຕົນມີເພື່ອເລືອກເອົາພຣະເຈົ້າຜູ້ເປັນມໍລະດົກດຽວໃນຊີວິດຂອງຕົນ. ດັ່ງທີ່ເພງສັກສິດ 15 ວັນນີ້ກ່າວວ່າ: "ພຣະເຈົ້າເປັນມໍລະດົກຂອງຂ້າພະເຈົ້າ".

ສ່ວນບົດອ່ານທີສອງ, ນັກບຸນເປົາໂລໄດ້ອະທິບາຍໃຫ້ກຸ່ມກຣິສຕະຊົນຢູ່ເມືອງກາລາຊີອາເຂົ້າໃຈເຖິງຄວາມໝາຍຂອງການຖືກເລືອກສັນຈາກພຣະເຈົ້າ. ນັກບຸນເປົາໂລກ່າວວ່າ: ການທີ່ພວກເຮົາຖືກຮຽກເອີ້ນນັ້ນບໍ່ແມ່ນເພື່ອຕົວເອງ, ແຕ່ແມ່ນເພື່ອຮັບໃຊ້ເພື່ອນພີ່ນ້ອງດ້ວຍຄວາມຮັກ. ດັ່ງທີ່ພຣະເຢຊູເຈົ້າສັ່ງບອກໃນພຣະບັນຍັດເອກຂອງພຣະອົງວ່າ: "ຈົ່ງຮັກຜູ້ອື່ນຄືຮັກຕົວເອງ". ເມື່ອພວກເຮົາຄິດຫາຄົນອື່ນແລະຮັບໃຊ້ຄົນອື່ນແລ້ວ, ພວກເຮົາຈະອອກຈາກຄວາມເຫັນແກ່ຕົວ, ຄວາມໂລບມາກໂລພາ, ຄວາມເປັນຂ້ອຍທາດຂອງເນື້ອໜັງ. ເພາະພຣະເຈົ້າຮຽກພວກເຮົາໃຫ້ເດີນຕາມພຣະອົງໂດຍການເອົາແບບຢ່າງຂອງພຣະອົງ ເພື່ອເປັນຄົນໃໝ່, ຄົນທີ່ມີເສລີພາບໃນການທຳຄວາມດີ.

ສ່ວນໃນພຣະວໍລະສານວັນນີ້, ພວກເຮົາກໍເຫັນວ່າມີຫລາຍຄົນມາຫາພຣະເຢຊູເຈົ້າ, ແຕ່ພຣະອົງຊົງເລືອກເອົາຜູ້ທີ່ພຣະອົງປາດຖະໜາ. ແລະຄຳຕອບຮັບຕໍ່ສຽງຮຽກເອີ້ນນີ້ຄືການສະຫລະທຸກສິ່ງຢ່າງແມ່ນແຕ່ພໍ່ແມ່, ອ້າຍເອື້ອຍນ້ອງຂອງຕົນເພື່ອຕິດຕາມພຣະອົງໄປ.

**ພາວະນາ**

ໂອພຣະເຢຊູເຈົ້າ, ລູກຂໍຂອບພຣະຄຸນພຣະອົງສຳລັບສຽງຮຽກເອີ້ນທຳອິດທີ່ພຣະອົງໄດ້ຮຽກເອີ້ນລູກ ຄືໃຫ້ລູກເປັນລູກຂອງພຣະອົງຜ່ານທາງສິນລ້າງບາບ. ຈາກນັ້ນ, ພຣະອົງກໍຍັງຮຽກເອີ້ນລູກໃຫ້ຕິດຕາມພຣະອົງໄປເພື່ອປະກາດອານາຈັກສະຫວັນໃຫ້ຄົນອື່ນຮູ້ຈັກ. ໂຜດຊ່ວຍລູກໃຫ້ສັດຊື່ຕໍ່ກະແສຮຽກຂອງຕົນດ້ວຍການສະຫລະຕົວເອງແຕ່ລະວັນ, ເພື່ອຈະໄດ້ຄິດຫາຄົນອື່ນແລະຮັບໃຊ້ຄົນອື່ນດັ່ງທີ່ພຣະອົງປາດຖະໜາດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ